ບໍລິສັດ ມະຫະທຶນ ເຊົ່າສົມເຊື່ອ ມະຫາຊົນ

ເອກະສານລາຍງານການເງິນ
(ທີ່ບທອນຄືນ)

ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2026

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນກາງປີ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ບໍລິຫານ ຂອງບໍລິສັດ ມະຫະທຶນເຊົ່າສິນເຊື່ອ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນທາງການເງິນ ຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ເຊິ່ງປະກອບດ້ວຍໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມິຖຸນາ 2026, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະຫົກເດືອນສິ້ນສຸດວັນທີດຽວກັນ ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນກາງປີໂດຍຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການກະກຽມ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນກາງປີ. ຄວາມຮັບຜິດຊອບຂອງພວກຂ້າພະເຈົ້າຄືການອອກບົດສະຫຼຸບຕໍ່ເອກະສານລາຍງານການເງິນດັ່ງກ່າວບົນພື້ນຖານການທົບທວນຄືນ ຂອງພວກຂ້າພະເຈົ້າ.

ຂອບເຂດ ການທົບທວນຄືນ

ພວກຂ້າພະເຈົ້າໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບມາດຕະຖານ ການທົບທວນຄືນແບບສາກົນ 2410 "ການທົບທວນຄືນເອກະສານລາຍງານການເງິນກາງປີ ໂດຍຜູ້ກວດສອບອິດສະຫຼະ". ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມບຸກຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິໄຈຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການທົບທວນຄືນນີ້ມີຂອບເຂດຈຳກັດກວ່າການກວດສອບຕາມມາດຕະຖານການກວດສອບສາກົນ. ສະນັ້ນ, ການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກຂ້າພະເຈົ້າໄດ້. ດັ່ງນັ້ນ, ພວກຂ້າພະເຈົ້າຈະບໍ່ສະແດງຄວາມເຫັນບົນພື້ນຖານການກວດສອບ.

ສະຫຼຸບ

ບົນພື້ນຖານ ການທົບທວນຄືນຂອງພວກຂ້າພະເຈົ້າ, ບໍ່ມີຫຍັງທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນກາງປີດັ່ງກ່າວ ບໍ່ໄດ້ກະກຽມຂໍ້ມູນທີ່ຖືກຕ້ອງຢ່າງເປັນສາລະສຳຄັນ ຕາມນະໂຍບາຍການບັນຊີ ຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ບົດອະທິບາຍຂໍ້ທີ 2 ໃນເອກະສານລາຍງານການເງິນນີ້.

ການເນັ້ນຍ້ຳເລື່ອງສຳຄັນ - ພື້ນຖານໃນການສ້າງເອກະສານລາຍງານການເງິນ

ພວກເຮົາຂໍເນັ້ນຍ້ຳໃຫ້ເຫັນເຖິງບົດອະທິ 2 ຂອງເອກະສານລາຍງານການເງິນກາງປີ ຊຶ່ງໄດ້ອະທິບາຍເຖິງພື້ນຖານໃນການສ້າງເອກະສານລາຍງານການເງິນ. ເອກະສານລາຍງານກາງປີນີ້ ໄດ້ຖືກສ້າງຂຶ້ນຕາມນະໂຍບາຍການບັນຊີທີ່ອະທິບາຍໄວ້ໃນບົດອະທິ 2 ຂອງເອກະສານລາຍງານ ການເງິນກາງປີ. ຂໍ້ສະຫຼຸບຂອງພວກເຮົາບໍ່ໄດ້ຖືກປັບປຸງ ຫຼື ປ່ຽນແປງໃດໆ ອັນເນື່ອງມາຈາກເລື່ອງນີ້.

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ

ໂດຍ: ທ່ານ ພິງພັນ ດຳຣິງພັນອຸດົມ
ຮຸ້ນສ່ວນ

ນະຄອນຫຼວງວຽງຈັນ, ສປປ ລາວ
17 ສິງຫາ 2026

ບໍລິສັດ ພຣາຍສວໍເຕີເຮົ້າສກຸບເປີສ (ລາວ) ຈຳກັດຜູ້ດຽວ
ອາຄານ AGL, ຊັ້ນ 4, ອາຄານເລກທີ 33ຖະໜົນລ້ານຊ້າງ,
ຕຸ້ ປ.ນ 7003, ນະຄອນຫຼວງວຽງຈັນ, ສປປ ລາວ,
ໂທ: +856 21 222718-9

www.pwc.com

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2026

	ບົດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	4	837,654,258	598,459,960
ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ			
ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ - ສັດສ່ວນໝຸນວຽນ	5	56,654,671,921	56,789,226,059
ຊັບສິນຖືໄວ້ເພື່ອຂາຍ, ສຸດທິ	6	2,427,920,630	1,929,234,368
ຊັບສິນໝຸນວຽນອື່ນໆ	7	1,654,916,734	1,312,932,438
ລວມຊັບສິນໝຸນວຽນ		**61,575,163,543**	**60,629,852,825**
ຊັບສິນບໍ່ໝຸນວຽນ			
ເງິນຝາກທີ່ທະນາຄານແຫ່ງ ສປປ ລາວ		2,000,002,700	2,000,002,700
ໜີ້ຕ້ອງຮັບຈາກສັນຍາເຊົ່າການເງິນ			
ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ	5	44,215,051,461	46,153,855,179
ຊັບສິນຄົງທີ່ມີຕົວຕົນ, ສຸດທິ	8	1,021,694,896	633,231,597
ຊັບສິນຄົງທີ່ບໍ່ມີຕົວຕົນ, ສຸດທິ		4	4
ຊັບສິນບໍ່ໝຸນວຽນ ອື່ນໆ		127,284,717	10,003,000
ລວມຊັບສິນບໍ່ໝຸນວຽນ		**47,364,033,778**	**48,797,092,480**
ລວມຊັບສິນ		**108,939,197,321**	**109,426,945,305**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

13 ສິງຫາ 2026

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

13 ສິງຫາ 2026

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຖານະການເງິນ
ໃນວັນທີ 30 ມິຖຸນາ 2026

	ບົດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສິ່ງທາງການຄ້າ ແລະ ໜີ້ຕ້ອງສິ່ງອື່ນໆ	9	2,569,631,102	4,431,630,401
ໜີ້ຕ້ອງສິ່ງອາກອນລາຍໄດ້		1,433,548,371	2,506,386,592
ເງິນກູ້ຢືມໄລຍະສັ້ນ	10	10,093,871,608	7,000,000,000
ໜີ້ສິນໝຸນວຽນອື່ນໆ		92,532,817	49,959,762
ລວມໜີ້ສິນໝຸນວຽນ		**14,189,583,898**	**13,987,976,755**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ	11	4,000,000,000	4,000,000,000
ໜີ້ສິນບໍ່ໝຸນວຽນອື່ນໆ		174,900,000	187,475,000
ລວມໜີ້ສິນບໍ່ໝຸນວຽນ		**4,174,900,000**	**4,187,475,000**
ລວມໜີ້ສິນ		**18,364,483,898**	**18,175,451,755**
ທຶນເຈົ້າຂອງ			
ທຶນຈົດທະບຽນ		40,000,000,000	40,000,000,000
ສ່ວນເພີ່ມມູນຄ່າຮຸ້ນ		12,832,667,550	12,832,667,550
ກຳໄລສະສົມ			
ຄັງສະສົມຕາມລະບຽບການ		7,523,815,481	7,523,815,481
ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ		30,218,230,392	30,895,010,519
ທຶນເຈົ້າຂອງ		**90,574,713,423**	**91,251,493,550**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**108,939,197,321**	**109,426,945,305**

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

13 ສິງຫາ 2026

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

13 ສິງຫາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 17 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2026

	ບົດ ອະທິບາຍ	ທີ່ຫວນຄືນ 30 ມິຖຸນາ 2026 ກີບ	ທີ່ຫວນຄືນ 30 ມິຖຸນາ 2025 ກີບ
ລາຍຮັບຈາກດອກເບ້ຍ - ສັນຍາເຊົ່າການເງິນ ແລະ ສິນເຊື່ອຜ່ອນຊຳລະ		21,723,448,563	18,467,740,255
ລາຍຮັບອື່ນໆ	12	671,540,495	803,245,899
ລວມລາຍຮັບ		**22,394,989,058**	**19,270,986,154**
ລາຍຈ່າຍໃນການບໍລິຫານ	13	(11,465,550,708)	(12,492,644,406)
ໜີ້ເສຍ ແລະ ໜີ້ຕ້ອງຮັບທວງຍາກ		(1,809,741,318)	(1,679,342,129)
ລາຍຈ່າຍການເງິນ		(1,933,197,922)	(332,888,885)
(ຂາດທຶນ)/ກຳໄລສຸດທິຈາກອັດຕາແລກປ່ຽນ		(29,730,866)	81,916,323
ລວມລາຍຈ່າຍ		**(15,238,220,814)**	**(14,422,959,097)**
ກຳໄລກ່ອນອາກອນ		**7,156,768,244**	**4,848,027,057**
ລາຍຈ່າຍອາກອນລາຍໄດ້	15	(1,433,548,371)	(963,456,118)
ກຳໄລສຸດທິໃນງວດ		**5,723,219,873**	**3,884,570,939**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	16	14.31	9.71

ທ່ານ ມານິບ ຕຣິລິດວິໄລ
ຜູ້ອຳນວຍການໃຫ່ຍ

13 ສິງຫາ 2026

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

13 ສິງຫາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 17 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ.

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2026

	ບົດ ອະທິບາຍ	ທຶນຈົດທະບຽນ ກີບ	ສ່ວນເພີ່ມມູນຄ່າຮຸ້ນ ກີບ	ກຳໄລສະສົມ ຈັດສັນ ຄ້າງສະສົມຕາມລະບຽບການ ກີບ	ກຳໄລສະສົມ ທີ່ຍັງບໍ່ໄດ້ຈັດສັນ ກີບ	ລວມ ກີບ
ໃນວັນທີ 1 ມັງກອນ 2025		40,000,000,000	12,832,667,550	6,486,859,985	21,562,411,058	80,881,938,593
ກຳໄລໃນງວດ		-	-	-	3,884,570,939	3,884,570,939
ຈ່າຍເງິນປັນຜົນ	14	-	-	-	-	-
ໃນວັນທີ 30 ມິຖຸນາ 2025		**40,000,000,000**	**12,832,667,550**	**6,486,859,985**	**25,446,981,997**	**84,766,509,532**
ໃນວັນທີ 1 ມັງກອນ 2026		40,000,000,000	12,832,667,550	7,523,815,481	30,895,010,519	91,251,493,550
ກຳໄລໃນງວດ		-	-	-	5,723,219,873	5,723,219,873
ຈ່າຍເງິນປັນຜົນ	14	-	-	-	(6,400,000,000)	(6,400,000,000)
ໃນວັນທີ 30 ມິຖຸນາ 2026		**40,000,000,000**	**12,832,667,550**	**7,523,815,481**	**30,218,230,392**	**90,574,713,423**

ທ່ານ ມານີ ຕຣີລິດວິໄລ
ຜູ້ອຳນວຍການໃຫ່ຍ

13 ສິງຫາ 2026

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

13 ສິງຫາ 2026

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 8 - 17 ແມ່ນສ່ວນໜຶ່ງ ຂອງເອກະສານລາຍງານການເງິນສະບັບນີ້.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ໃບລາຍງານກະແສເງິນສົດ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2026

	ບົດ ອະທິບາຍ	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ:			
ກຳໄລກ່ອນອາກອນ		7,156,768,244	4,848,027,057
ດັດແກ້ເພື່ອສົມທຽບກຳໄລສຸດທິ ແລະ ເງິນສົດສຸດທິ			
ໜີ້ສູນ ແລະ ສຳຮອງໜີ້ສົງໄສຈະເສຍ		1,809,741,318	1,679,342,129
ຄ່ານາຍໜ້າລໍຖ້າຕັດບັນຊີ		801,797,472	527,238,714
ການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ		16,250,000	12,500,000
ຄ່າຫຼ້ຍຫ້ຽນ	8	125,910,038	113,920,164
ລາຍຈ່າຍການເງິນ		1,933,197,922	242,333,333
ກຳໄລຈາກອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ		(1,274,554)	(43,246,469)
ກຳໄລຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**11,842,390,440**	**7,380,114,928**
ການປ່ຽນແປງທຶນໝຸນວຽນ:			
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ		156,719,066	(20,336,184,988)
ຊັບສິນຖືໄວ້ເພື່ອຂາຍ		(514,936,262)	(255,841,107)
ຊັບສິນໝຸນວຽນ ແລະ ບໍ່ໝຸນວຽນ		(459,266,015)	63,342,772
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(1,952,261,189)	1,220,566,680
ໜີ້ສິນໝຸນວຽນອື່ນໆ ແລະ ໜີ້ສິນບໍ່ໝຸນວຽນອື່ນໆ		29,998,056	(9,066,106)
ເງິນສົດຈາກ/(ໃຊ້ໄປ)ກິດຈະກຳດຳເນີນງານ		**9,102,644,096**	**(11,937,067,821)**
ຈ່າຍຄ່ານາຍໜ້າ		(694,900,000)	(1,136,650,000)
ຈ່າຍດອກເບ້ຍ		(1,842,936,031)	(242,333,333)
ຈ່າຍອາກອນລາຍໄດ້		(2,506,386,592)	(742,996,662)
ເງິນສົດສຸດທິຈາກ/(ໃຊ້ໄປ)ກິດຈະກຳດຳເນີນງານ		**4,058,421,473**	**(14,059,047,816)**

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ທ່ານ ມານິບ ຕຣີສິດວິໄລ
ຜູ້ອຳນວຍການໃຫ່ຍ

13 ສິງຫາ 2026

ທ່ານ ນາງ ສຸລີພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

13 ສິງຫາ 2026

ໃບລາຍງານກະແສເງິນສົດ
ສຳລັບຫົກເດືອນສິ້ນສຸດວັນທີ 30 ມິຖຸນາ 2026

	ບົດອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ເງິນສົດຈ່າຍຊື້ຊັບສິນບັດຄົງທີ່ມີຕົວຕົນ	8	(514,373,337)	(126,214,000)
ເງິນສົດສຸດທິໃຊ້ໄປໃນກິດຈະກຳການລົງທຶນ		**(514,373,337)**	**(126,214,000)**
ກະແສເງິນສົດຈາກກິດຈະກຳການເງິນ			
ຮັບຈາກເງິນກູ້ຢືມໄລຍະສັ້ນ	10	24,000,000,000	8,500,000,000
ຮັບຈາກເງິນກູ້ຢືມໄລຍະຍາວ	11	-	4,000,000,000
ຈ່າຍຄືນເງິນກູ້ຢືມໄລຍະສັ້ນ	10	(20,906,128,392)	(1,500,000,000)
ຈ່າຍເງິນປັນຜົນ	14	(6,400,000,000)	-
ເງິນສົດສຸດທິ(ໃຊ້ໄປໃນ)/ຮັບຈາກກິດຈະກຳການເງິນ		**(3,306,128,392)**	**11,000,000,000**
ເພີ່ມຂຶ້ນ/(ຫຼຸດລົງ) ສຸດທິໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**237,919,744**	**(3,185,261,816)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນງວດ		598,459,960	3,766,310,317
ກຳໄລຈາກອັດຕາແລກປ່ຽນ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		1,274,554	28,513,788
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ	4	**837,654,258**	**609,562,289**

ທ່ານ ມານິບ ຕຣິວິດວິໄລ
ຜູ້ອຳນວຍການໃຫ່ຍ

13 ສິງຫາ 2026

ທ່ານ ນາງ ສຸລິພອນ ສຸວັນໄຊລິບ
ຜູ້ອຳນວຍການຝ່າຍການເງິນ

13 ສິງຫາ 2026

1. ຂໍ້ມູນທົ່ວໄປ

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດທີ່ໄດ້ຈົດທະບຽນໃນຕະຫຼາດຫຼັກຊັບລາວ ແລະ ຈົດທະບຽນສ້າງຕັ້ງຢູ່ໃນ ສປປ ລາວ. ບໍລິສັດໄດ້ຈົດທະບຽນສ້າງຕັ້ງ ກັບກະຊວງອຸດສາຫະກຳ ແລະ ການຄ້າ ໃນວັນທີ 2 ກັນຍາ 2011. ບໍລິສັດ ໄດ້ເລີ່ມດຳເນີນທຸລະກິດພາຍຫຼັງທີ່ໄດ້ຮັບໃບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ ໃນວັນທີ 11 ມິຖຸນາ 2012.

ເມື່ອວັນທີ 13 ມິຖຸນາ 2018, ບໍລິສັດ ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງຫຼັກຊັບລາວ ໃຫ້ຈຳໜ່າຍຮຸ້ນແກ່ປະຊາຊົນທົ່ວໄປເປັນຄັ້ງທຳອິດ.

ສຳນັກງານໃຫຍ່ຂອງບໍລິສັດ ຕັ້ງຢູ່ເຮືອນເລກທີ 628, ບ້ານໂພນພະເນົາ, ກິໂລແມັດ 5, ຖະໜົນໄກສອນພົມວິຫານ, ເມືອງໄຊເສດຖາ , ນະຄອນຫຼວງວຽງຈັນ, ສປປ ລາວ.

ກິດຈະກຳຫຼັກ ຂອງບໍລິສັດແມ່ນການສະໜອງສິນເຊື່ອສຳລັບລູກຄ້າລາຍຍ່ອຍໂດຍການໃຫ້ສິນເຊື່ອແກ່ລູກຄ້າລາຍບຸກຄົນເພື່ອຊື້ ລົດຈັກ, ລົດໄຖ ແລະ ຄຳ.

ເອກະສານລາຍງານການເງິນ ໄດ້ມີການອະນຸມັດໃຫ້ອອກບົດລາຍງານ ໂດຍສະພາຜູ້ບໍລິຫານໃນວັນທີ 13 ສິງຫາ 2026.

2. ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ

ເອກະສານລາຍງານການງປີນີ້ໄດ້ຖືກຈັດກຽມຂຶ້ນຕາມນະໂຍບາຍການບັນຊີຂອງບໍລິສັດ ດັ່ງທີ່ໄດ້ອະທິບາຍລາຍລະອຽດໄວ້ໃນເອກະສານລາຍງານການເງິນປະຈຳປີສຳລັບປີສິ້ນສຸດວັນທີ 31 ທັນວາ 2025. ຂໍ້ມູນເອກະສານລາຍງານການເງິນຫຼັກ (ໄດ້ແກ່ ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບສະຫຼຸບການປ່ຽນແປງສ່ວນທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ) ໄດ້ນຳສະເໜີໃນຮູບແບບຂໍ້ມູນການເງິນລະຫວ່າງການແບບຫຍໍ້ ໂດຍສອດຄ່ອງກັບເອກະສານລາຍງານການເງິນປະຈຳປີ ແລະ ປະຕິບັດຕາມຂໍ້ກຳນົດການລາຍງານ ແລະ ການເປີດເຜີຍຂໍ້ມູນ ທີ່ອອກໂດຍສຳນັກງານຄະນະກຳມະການຫຼັກຊັບແຫ່ງ ສປປ ລາວ.

ເອກະສານລາຍງານການເງິນແບບຫຍໍ້ ປະກອບມີ ໃບລາຍງານຖານະການເງິນ ນະ ວັນທີ 30 ມິຖຸນາ 2026 ພ້ອມດ້ວຍຂໍ້ມູນປຽບທຽບ ນະ ວັນທີ 31 ທັນວາ 2025, ໃບລາຍງານຜົນໄດ້ຮັບສຳລັບໄລຍະ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026 ພ້ອມດ້ວຍຂໍ້ມູນປຽບທຽບສຳລັບໄລຍະ 6 ເດືອນທີ່ສອດຄ່ອງກັນ ສິ້ນສຸດວັນທີ 30 ມິຖຸນາ 2025, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ສຳລັບໄລຍະ 6 ເດືອນ ສິ້ນສຸດວັນທີ 30 ມິຖຸນາ 2026 ພ້ອມດ້ວຍຂໍ້ມູນປຽບທຽບສຳລັບໄລຍະ 6 ເດືອນທີ່ສອດຄ່ອງກັນ ສິ້ນສຸດວັນທີ 30 ມິຖຸນາ 2025 ແລະ ໝາຍເຫດປະກອບຂໍ້ມູນເອກະສານລາຍງານການເງິນແບບຫຍໍ້ ຊຶ່ງໄດ້ນຳສະເໜີບົນພື້ນຖານທີ່ສອດຄ່ອງກັບການເປີດເຜີຍຂໍ້ມູນໃນເອກະສານລາຍການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2025.

ເອກະສານລາຍງານການເງິນສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2025.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດສາທາລະນະ (PIEs) ຕ້ອງປະຕິບັດມາດຕະຖານການລາຍງານການເງິນສາກົນ, ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (LSCO) ເລກທີ 0009/ຄຄຊ ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ PIEs ໃນການຈັດການເຮັດແຜນປະຕິບັດການ ສຳລັບການນຳໃຊ້ມາດຕະຖານການລາຍງານບັນຊີສາກົນ (IFRS) ຈົນຮອດວັນທີ 31 ທັນວາ 2025 ແລະ ນັບແຕ່ປີ 2026 ເປັນຕົ້ນໄປ, ບໍລິສັດ ຈົດທະບຽນທັງໝົດ ຕ້ອງຮັບຮອງເອົາ IFRS ຢ່າງເຕັມສ່ວນ. ເຊິ່ງຄະນະບໍລິຫານກຳລັງກະກຽມການນຳໃຊ້ IFRS ອີງຕາມການແຈ້ງການດັ່ງກ່າວ. ສະນັ້ນ ຫຼັກການບັນຊີທີ່ນຳໃຊ້ອາດຈະແຕກຕ່າງຢ່າງມີສາລະສຳຄັນ ຈາກບົດລາຍງານການເງິນຕາມມາດຕະຖານການລາຍງານການເງິນສາກົນ (IFRS)

2. ພື້ນຖານໃນການກະກຽມບົດລາຍງານ ແລະ ນະໂຍບາຍການບັນຊີ (ຕໍ່)

ເຖິງແມ່ນວ່າບັນດາຫົວໜ່ວຍທີ່ມີຜົນປະໂຫຍດຕໍ່ສາທາລະນະ, ໂດຍສະເພາະບັນດາບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ, ຈະຕ້ອງນຳໃຊ້ມາດຕະຖານລາຍງານການເງິນສາກົນ ("IFRS") ນັບແຕ່ປີ 2026 ເປັນຕົ້ນໄປ, ແຕ່ມາຮອດວັນທີລາຍງານ ບໍລິສັດຍັງບໍ່ທັນສຳເລັດໂຄງການປະຕິບັດ IFRS. ປັດຈຸບັນ, ບໍລິສັດກຳລັງດຳເນີນການຂໍອະນຸຍາດຈາກບັນດາອົງການກຳກັບດູແລທີ່ກ່ຽວຂ້ອງ ເພື່ອຂໍຂະຫຍາຍກຳນົດເວລາໃນການນຳໃຊ້ IFRS. ຈົນກວ່າການປະຕິບັດດັ່ງກ່າວຈະສຳເລັດ, ເອກະສານລາຍງານການເງິນສະບັບນີ້ຍັງສືບຕໍ່ຈັດທຳຂຶ້ນຕາມນະໂຍບາຍການບັນຊີທີ່ບໍລິສັດນຳໃຊ້ໃນປັດຈຸບັນ ແລະ ນຳໃຊ້ຢ່າງສອດຄ່ອງກັບປີກ່ອນ. ດັ່ງນັ້ນ, ເອກະສານລາຍງານການເງິນສະບັບນີ້ອາດຈະບໍ່ສອດຄ່ອງຢ່າງຄົບຖ້ວນກັບທຸກຂໍ້ກຳນົດຂອງ IFRS ກ່ຽວກັບການຮັບຮູ້, ການວັດແທກ, ການນຳສະເໜີ ແລະ ການເປີດເຜີຍຂໍ້ມູນ.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3. ການຄາດຄະເນ

ການສ້າງເອກະສານລາຍງານການເງິນ ແມ່ນຮຽກຮ້ອງໃຫ້ຜູ້ບໍລິຫານໃຊ້ດຸນພິນິດ, ການຄາດຄະເນ ແລະ ການສົມມຸດຕິຖານທີ່ມີຜົນກະທົບຕໍ່ນະໂຍບາຍການບັນຊີ ແລະ ການລາຍງານຕົວເລກ ຂອງຊັບສິນ ແລະ ໜີ້ສິນ, ລາຍຮັບ ແລະ ລາຍຈ່າຍ ເຊິ່ງໃນຄວາມເປັນຈິງອາດຈະມີຄວາມແຕກຕ່າງຈາກການຄາດຄະເນໄວ້.

ໃນການກະກຽມເອກະສານລາຍງານສະບັບນີ້, ຜູ້ບໍລິຫານໄດ້ໃຊ້ດຸນພິນິດທີ່ເປັນສາລະສຳຄັນໂດຍປະຍຶດຕາມນະໂຍບາຍການບັນຊີຂອງບໍລິສັດ ແລະ ແຫຼ່ງທີ່ມາທີ່ສຳຄັນຂອງຄວາມບໍ່ແນ່ນອນຂອງການປະມານການເຊັ່ນດຽວກັບທີ່ໃຊ້ກັບເອກະສານລາຍງານການເງິນສຳລັບປີສິ້ນສຸດວັນທີ 31 ທັນວາ 2025.

4. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທີ່ບໍ່ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ເງິນສົດໃນມື	8,808,134	15,625,200
ເງິນຝາກທະນາຄານ	828,846,124	582,834,760
ລວມ	**837,654,258**	**598,459,960**

5. ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ

	ທີ່ບໍ່ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ໝຸນວຽນ		
ສັດສ່ວນໝຸນວຽນຂອງໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	608,956,740	595,319,051
ສັດສ່ວນໝຸນວຽນຂອງລູກໜີ້ສິນເຊື່ອຜ່ອນຊຳລະ	66,971,784,361	67,107,274,649
	67,580,741,101	**67,702,593,700**
ເພີ່ມ ຕົ້ນທຶນທາງກົງ	612,832,414	582,834,279
ຫັກ ສຳຮອງໜີ້ສົງໄສຈະເສຍ	(11,538,901,594)	(11,496,201,920)
	56,654,671,921	**56,789,226,059**
ບໍ່ໝຸນວຽນ		
ໜີ້ຕ້ອງຮັບຈາກສັນຍາເຊົ່າທາງການເງິນ	516,084,110	549,523,193
ລູກໜີ້ສິນເຊື່ອຜ່ອນຊຳລະ	44,119,676,197	45,402,362,268
	44,635,760,307	**45,951,885,461**
ເພີ່ມ ຕົ້ນທຶນທາງກົງ	797,785,089	934,680,697
ຫັກ ສຳຮອງໜີ້ສົງໄສຈະເສຍ	(1,218,493,935)	(732,710,979)
	44,215,051,461	**46,153,855,179**
ລວມ	**100,869,723,382**	**102,943,081,238**

5. ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ລູກໜີ້ສິນເຊື່ອຜ່ອນຊຳລະ, ສຸດທິ (ຕໍ່)

ໃນວັນທີ 30 ມິຖຸນາ 2026 ແລະ 31 ທັນວາ 2025, ໜີ້ຕ້ອງຮັບສັນຍາເຊົ່າການເງິນ ແລະ ໜີ້ຕ້ອງຮັບເງິນກູ້ຜ່ອນຊຳລະໃນໃບລາຍງານຖານະການເງິນ, ສາມາດວິເຄາະອາຍຸການໄດ້ດັ່ງນີ້:

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ບໍ່ຄົບກຳນົດ	81,527,898,996	87,948,861,615
1 – 3 ເດືອນ	17,291,326,846	13,270,425,270
4 ເດືອນ	1,583,976,378	780,351,396
5– 6 ເດືອນ	1,318,435,939	1,343,140,594
ເກີນ 6 ເດືອນ	10,494,863,249	10,311,700,287
	112,216,501,408	**113,654,479,162**
ເພີ່ມ ຕົ້ນທຶນທາງກົງ	1,410,617,503	1,517,514,975
ຫັກ ສຳຮອງໜີ້ສົງໄສຈະເສຍ	(12,757,395,529)	(12,228,912,899)
ລວມ	**100,869,723,382**	**102,943,081,238**

6. ຊັບສິນຖືໄວ້ເພື່ອຂາຍ, ສຸດທິ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ລິດຈັກ	2,521,670,630	2,006,734,368
ຫັກ ເງິນແຮການສູນເສຍມູນຄ່າຂອງຊັບສິນຖືໄວ້ເພື່ອຂາຍ	(93,750,000)	(77,500,000)
ລວມ	**2,427,920,630**	**1,929,234,368**

7. ຊັບສິນໝຸນວຽນອື່ນໆ

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຄ່າໃຊ້ຈ່າຍລ່ວງໜ້າ[1]	1,554,138,746	1,006,388,402
ຈ່າຍເງິນລ່ວງໜ້າ	29,366,000	38,255,851
ອາກອນມູນຄ່າເພີ່ມລໍຖ້າຕັດ	49,031,988	239,503,714
ອື່ນໆ	22,380,000	28,784,471
ລວມ	**1,654,916,734**	**1,312,932,438**

(1) ຈ່າຍລ່ວງໜ້າ ຕົ້ນຕໍແມ່ນ ການຊຳລະຄ່າເຊົ່າຫ້ອງການລ່ວງໜ້າ ຈຳນວນ 458 ລ້ານກີບ ແລະ ຄ່າທຳນຽມໃນການກູ້ຢືມ 944 ລ້ານກີບ

8. ຊັບສິນຄົງທີ່ມີຕົວຕົນ, ສຸດທິ

	ກີບ
ໃນວັນທີ 1 ມັງກອນ 2026 – ກວດສອບ	633,231,597
ເພີ່ມຂຶ້ນ	514,373,337
ສະສາງຊັບສິນ	(266,821,091)
ຄ່າຫຼ້ຍຫ້ຽນສະສົມຂອງຊັບສິນທີ່ສະສາງ	266,821,091
ຫັກ: ຄ່າຫຼ້ຍຫ້ຽນ	(125,910,038)
ມູນຄ່າສຸດທິຕາມບັນຊີ ໃນວັນທີ 30 ມິຖຸນາ 2026 – ທີ່ບທອນຄືນ	**1,021,694,896**

9 ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທີ່ບທອນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ລາຍຈ່າຍຄ້າງຈ່າຍ [1]	1,704,248,012	2,299,321,000
ໜີ້ຕ້ອງສົ່ງການຄ້າ [2]	742,655,000	2,012,890,700
ໜີ້ຕ້ອງສົ່ງອາກອນອື່ນໆ	122,728,090	119,418,701
ລວມ	**2,569,631,102**	**4,431,630,401**

(1) ລາຍຈ່າຍຄ້າງຈ່າຍສ່ວນໃຫຍ່ແມ່ນປະກອບດ້ວຍ ປະມານການລາຍຈ່າຍເງິນບຳເນັດ (ໂບນັດ) ພະນັກງານປະຈຳປີຈຳນວນ 644 ລ້ານກີບ ແລະ ລາຍຈ່າຍຄ້າງຈ່າຍແກ່ບໍລິສັດກວດສອບ ແລະ ບໍລິການອື່ນໆ 605 ລ້ານກີບ.

(2) ໜີ້ຕ້ອງສົ່ງການຄ້າແມ່ນໜີ້ຕ້ອງຈ່າຍໃຫ້ຜູ້ສະໜອງລິດຈັກ 715 ລ້ານກີບ ແລະ ຄຳ 27 ລ້ານກີບ.

10. ເງິນກູ້ຢືມໄລຍະສັ້ນ

ລາຍການເຄື່ອນໄຫວຂອງເງິນກູ້ຢືມໄລຍະສັ້ນ ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2026 ມີດັ່ງລຸ່ມນີ້:

	ທົບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ	7,000,000,000	–
ເງິນກູ້ຢືມທີ່ເພີ່ມ	24,000,000,000	8,500,000,000
ຊຳລະເງິນກູ້ຢືມຄືນ	(20,906,128,392)	(1,500,000,000)
ຂາດທຶນຈາກການຕີມູນຄ່າອັດຕາແລກປ່ຽນ	–	–
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**10,093,871,608**	**7,000,000,000**

·ປີ 2025: ໃນວັນທີ 11 ມີນາ 2025, ບໍລິສັດໄດ້ລົງນາມສັນຍາເງິນກູ້ ໃນວົງເງິນ 7 ຕື້ກີບ, ໄລຍະເວລາ 12 ເດືອນ, ອັດຕາດອກເບ້ຍ 12% ຕໍ່ປີ. ວົງເງິນກູ້ນີ້ບໍ່ມີຫຼັກຊັບຄ້ຳປະກັນ ແຕ່ບໍລິສັດໄດ້ອະນຸຍາດໃຫ້ທະນາຄານຕັດເງິນຈາກບັນຊີຮັບຄ່າເຊົ່າໃນກໍລະນີທີ່ບໍ່ສາມາດຈ່າຍຄືນຕາມກຳນົດ.
·ປີ 2026 (ການຕໍ່ສັນຍາ): ໃນວັນທີ 11 ມີນາ 2026, ບໍລິສັດໄດ້ຊຳລະຄືນເງິນກູ້ຄົງຄ້າງທັງໝົດພາຍໃຕ້ສັນຍາສະບັບເດີມແລ້ວ. ໃນວັນດຽວກັນ, ບໍລິສັດໄດ້ລົງນາມສັນຍາກູ້ຢືມເງິນສະບັບໃໝ່ ໃນວົງເງິນ 7 ຕື້ກີບ, ອັດຕາດອກເບ້ຍ 12% ຕໍ່ປີ, ໂດຍປ່ຽນຮູບແບບການຊຳລະຄືນເປັນງວດປະຈຳເດືອນ (ທັງເງິນຕົ້ນແລະດອກເບ້ຍ) ໄລຍະເວລາ 12 ເດືອນ ເຊິ່ງຈະສິ້ນສຸດໃນວັນທີ 11 ມີນາ 2027. ສ່ວນຂໍ້ກຳນົດແລະເງື່ອນໄຂອື່ນໆ ລວມທັງການຕັດເງິນຈາກບັນຊີຮັບຄ່າເຊົ່າ ແມ່ນຍັງຄົງບໍ່ມີການປ່ຽນແປງ. ນັບຮອດວັນທີ 30 ມິຖຸນາ 2026, ຍອດເງິນກູ້ຄົງຄ້າງມີຈຳນວນ 4,743.87 ລ້ານກີບ.

ວັນທີ 5 ມັງກອນ 2026, ບໍລິສັດໄດ້ລົງນາມສັນຍາກູ້ຢືມເງິນກັບທະນາຄານພາຍໃນ ໃນວົງເງິນ 5 ຕື້ກີບ, ໄລຍະເວລາ 36 ເດືອນ, ອັດຕາດອກເບ້ຍ 13% ຕໍ່ປີ. ວົງເງິນກູ້ນີ້ມີການົດຊຳລະດອກເບ້ຍເປັນປະຈຳທຸກເດືອນ ແລະ ຊຳລະຄືນເງິນຕົ້ນທັງໝົດໃນວັນຄົບກຳນົດສັນຍາ. ທັງນີ້, ວົງເງິນກູ້ຢືມດັ່ງກ່າວແມ່ນມີຫຼັກຊັບຄ້ຳປະກັນເປັນທີ່ດິນຂອງບຸກຄົນທີສາມ. ໃນໄລຍະງວດ ບໍລິສັດໄດ້ຖອນເງິນກູ້ຈຳນວນ 5 ຕື້ກີບ ແລະ ຊຳລະຄືນເງິນກູ້ຈຳນວນ 4,950 ລ້ານກີບ. ນັບຮອດວັນທີ 30 ມິຖຸນາ 2026, ຍອດເງິນກູ້ຄົງຄ້າງມີຈຳນວນ 50 ລ້ານກີບ.

ວັນທີ 3 ເມສາ 2026, ບໍລິສັດໄດ້ລົງນາມສັນຍາກູ້ຢືມເງິນກັບທະນາຄານພາຍໃນ ໃນວົງເງິນ 34 ຕື້ກີບ, ໄລຍະເວລາ 3 ປີ, ອັດຕາດອກເບ້ຍ 7.92% ຕໍ່ປີ. ວົງເງິນກູ້ນີ້ມີກຳນົດຊຳລະດອກເບ້ຍເປັນປະຈຳທຸກເດືອນ ແລະ ສາມາດຊຳລະຄືນເງິນຕົ້ນບາງສ່ວນ ຫຼື ທັງໝົດທຸກໆ 6 ເດືອນ. ທັງນີ້, ວົງເງິນກູ້ຢືມດັ່ງກ່າວແມ່ນມີຫຼັກຊັບຄ້ຳປະກັນໂດຍ Standby Letter of Credit (SBLC) ທີ່ອອກໂດຍສະຖາບັນການເງິນ. ໃນໄລຍະງວດ ບໍລິສັດໄດ້ຖອນເງິນກູ້ຈຳນວນ 12 ຕື້ກີບ ແລະ ຊຳລະຄືນເງິນກູ້ຈຳນວນ 6,700 ລ້ານກີບ. ນັບຮອດວັນທີ 30 ມິຖຸນາ 2026, ຍອດເງິນກູ້ຄົງຄ້າງມີຈຳນວນ 5,300 ລ້ານກີບ.

11. ເງິນກູ້ຢືມໄລຍະຍາວ

ລາຍການເຄື່ອນໄຫວຂອງເງິນກູ້ຢືມໄລຍະຍາວ ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2026 ມີດັ່ງລຸ່ມນີ້:

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	**ກວດສອບ 31 ທັນວາ 2025 ກີບ**
ຍອດຍົກມາມູນຄ່າຕາມບັນຊີ, ສຸດທິ	4,000,000,000	–
ເງິນກູ້ຢືມທີ່ເພີ່ມ	–	4,000,000,000
ຍອດເຫຼືອມູນຄ່າຕາມບັນຊີ, ສຸດທິ	**4,000,000,000**	**4,000,000,000**

ໃນວັນທີ 13 ມິນາ 2025, ບໍລິສັດໄດ້ລົງນາມສັນຍາກູ້ຢືມເງິນກັບທະນາຄານພາຍໃນ ໃນວົງເງິນ 4 ຕື້ກີບ, ໄລຍະເວລາ 36 ເດືອນ, ອັດຕາດອກເບ້ຍ 14.5% ຕໍ່ປີ. ວົງເງິນກູ້ນີ້ມີການຄິດຊາລະດອກເບ້ຍເປັນປະຈຳທຸກເດືອນ ແລະ ຊາລະຄືນເງິນຕົ້ນທັງໝົດໃນວັນຄົບກຳນົດສັນຍາ ວັນທີ 11 ມິນາ 2028. ທັງນີ້, ວົງເງິນກູ້ຢືມດັ່ງກ່າວແມ່ນມີຫຼັກຊັບຄ້ຳປະກັນ ເປັນເງິນຝາກປະຈຳຂອງບໍລິສັດແມ່ ເປັນມູນຄ່າ 200,000 ໂດລາສະຫະລັດ.

12. ລາຍຮັບອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	**ທີ່ບທວນຄືນ 30 ມິຖຸນາ 2025 ກີບ**
ລາຍຮັບຈາກການປັບໄໝ	504,869,883	690,689,574
ອື່ນໆ	163,125,804	100,706,741
ລາຍຮັບດອກເບ້ຍຈາກເງິນຝາກທະນາຄານ	3,544,808	11,849,584
ລວມ	**671,540,495**	**803,245,899**

13. ລາຍຈ່າຍໃນການບໍລິຫານ

ລາຍຈ່າຍໃນການບໍລິຫານປະກອບມີລາຍການດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ຄ່າໃຊ້ຈ່າຍທີ່ກ່ຽວກັບພະນັກງານ	6,359,696,743	8,060,117,064
ຄ່າໃຊ້ຈ່າຍທີ່ກ່ຽວກັບການໂຄສະນາ	807,523,754	835,465,367
ຄ່າໃຊ້ຈ່າຍໃນການເດີນທາງ	834,792,152	739,426,208
ຄ່າຕອບແທນຜູ້ບໍລິຫານ	760,000,000	627,500,000
ຄ່າບໍລິການກວດສອບ ແລະ ກົດໝາຍ	639,723,293	543,057,692
ຄ່າເຊົ່າ	537,465,823	535,679,166
ຄ່າໃຊ້ຈ່າຍອື່ນໆ	431,003,263	454,312,328
ຄ່າໃຊ້ຈ່າຍອຸປະກອນຫ້ອງການ	233,449,159	255,336,619
ລາຍຈ່າຍສາທາລະນຸປະໂພກ	141,573,948	135,487,985
ຄ່າໜ້ຽຫ້ຽນ	125,910,038	113,920,164
ຄ່າທຳນຽມທະນາຄານ ແລະ ອື່ນໆ	126,524,431	104,365,897
ຂາດທຶນສຸດທິຈາກການຂາຍຊັບສິນທີ່ຖືໄວ້ເພື່ອຂາຍ	411,776,478	34,504,804
ຄ່າໃຊ້ຈ່າຍອາກອນອື່ນໆ	56,111,626	53,471,112
	11,465,550,708	**12,492,644,406**

14. ເງິນປັນຜົນ

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2025 ໃນວັນທີ 21 ເມສາ 2026. ຜູ້ຖືຮຸ້ນໄດ້ອະນຸມັດການຈ່າຍເງິນປັນຜົນປະຈຳປີຈາກກຳໄລສຸດທິ 12 ເດືອນ ໄລຍະສິ້ນສຸດ ວັນທີ 31 ທັນວາ 2025 ໃນມູນຄ່າ 16 ກີບຕໍ່ຮຸ້ນ. ລວມມູນຄ່າ 6,400 ລ້ານກີບ ແລະ ຈັດສັນກຳໄລສຸດທິ ເພື່ອສຳຮອງຕາມກົດໝາຍຈຳນວນເງິນ 1,036.96 ລ້ານກີບ.

ໃນກອງປະຊຸມຜູ້ຖືຮຸ້ນສາມັນປະຈຳປີ 2024 ໃນວັນທີ 24 ເມສາ 2025, ຜູ້ຖືຮຸ້ນໄດ້ອະນຸມັດການຈັດສັນກຳໄລສຸດທິເພື່ອສຳຮອງຕາມກົດໝາຍ ຈຳນວນເງິນ 664.6 ລ້ານກີບ ແລະ ບໍ່ມີການຈ່າຍເງິນປັນຜົນສຳລັບຜົນການດຳເນີນງານໃນ 31 ທັນວາ 2024 ເພື່ອສຳຮອງກະແສເງິນສົດໃນການຮອງຮັບການຂະຫຍາຍທຸລະກິດໃນງົບປະມານປີ 2025.

15. ການຈ່າຍອາກອນລາຍໄດ້

ຢູ່ໃນ ສປປ ລາວ, ການແຈ້ງຈ່າຍອາກອນລາຍໄດ້ຖືກກວດກາເປັນປົກກະຕິໂດຍລະອຽດຈາກເຈົ້າໜ້າທີ່ກ່ຽວຂ້ອງ. ນອກຈາກນັ້ນ, ບັນຫາດ້ານອາກອນທີ່ຖືກຍົກຂຶ້ນມາໃນການທົບທວນຄືນອາດຈະຕ້ອງມີການຕັດສິນ ແລະ ການຕີຄວາມທີ່ມີສາລະສຳຄັນຈາກພາກສ່ວນທີ່ກ່ຽວຂ້ອງ.

ການທົບທວນດັ່ງກ່າວ ອາດຈະເຮັດໃຫ້ມີການຈ່າຍອາກອນເພີ່ມເຕີມ ຫຼື ສິ່ງເງິນຄືນທີ່ເປັນສາລະສຳຄັນ ເຊິ່ງອາດຈະເປັນສິ່ງທີ່ສຳຄັນ ເຊິ່ງຈະສົ່ງຜົນໃຫ້ການຊຳລະ ຫຼື ຮັບຄືນໄດ້ຖືກຮັບຮູ້ວ່າເປັນການປັບອາກອນລາຍໄດ້ໃນປີທີ່ການທົບທວນຄືນສຳເລັດ.

ການກະທົບຍອດລະຫວ່າງ ລາຍຈ່າຍອາກອນ ແລະ ກຳໄລທາງບັນຊີ ສຳລັບງວດການບັນຊີ ມີດັ່ງນີ້:

	ກີບ
ກຳໄລກ່ອນອາກອນ - ການບັນຊີ	7,156,768,244
ຜົນກະທົບດ້ານອາກອນ:	
ສຳຮອງເງິນແຮສຳລັບຊັບສິນຖືໄວ້ເພື່ອຂາຍ	16,250,000
ກຳໄລສຸດທິຈາກຕີມູນຄ່າອັດຕາແລກປ່ຽນທີ່ບໍ່ເກີດຂຶ້ນຈິງ	(5,276,387)
ລາຍຮັບທີ່ຕ້ອງເສຍອາກອນ:	**7,167,741,857**
ອັດຕາອາກອນກຳໄລ 20%	**1,433,548,371**

16. ກຳໄລພື້ນຖານຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການຫານກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນໂດຍສະເລ່ຍຕາມຈຳນວນ ຂອງຮຸ້ນສາມັນ ທີ່ມີທັງໝົດ ດັ່ງຕໍ່ໄປນີ້:

	ທົບທວນຄືນ 30 ມິຖຸນາ 2026 ກີບ	ທົບທວນຄືນ 30 ມິຖຸນາ 2025 ກີບ
ກຳໄລສຸດທິ ທີ່ເປັນຂອງຜູ້ຖືຮຸ້ນ (ກີບ)	5,723,219,873	3,884,570,939
ຈຳນວນຮຸ້ນສາມັນ (ຮຸ້ນ)	400,000,000	400,000,000
ກຳໄລພື້ນຖານຕໍ່ຮຸ້ນ (ກີບ)	14.31	9.71

17. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ກ. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ ສຳລັບໄລຍະຫົກເດືອນສິ້ນສຸດ ວັນທີ 30 ມິຖຸນາ 2026 ແລະ 2025 ບໍລິສັດບໍ່ມີລາຍການເຄື່ອນໄຫວຮ່ວມກັບບຸກຄົນ ຫຼື ກິດຈະການທີ່ກ່ຽວຂ້ອງກັນ.

ຂ. ຄ່າຕອບແທນຜູ້ບໍລິຫານ

ຄ່າຕອບແທນໃຫ້ຜູ້ບໍລິຫານມີດັ່ງຕໍ່ໄປນີ້:

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ທີ່ບທວນຄືນ 30 ມິຖຸນາ 2025 ກີບ
ຜົນປະໂຫຍດໄລຍະສັ້ນ	760,000,000	627,500,000

18. ພາລະຜູກພັນ

ບໍລິສັດມີພາລະຜູກພັນຕາມສັນຍາເຊົ່າພື້ນທີ່ສຳນັກງານໄລຍະຍາວ ສຳລັບການເຊົ່າພື້ນທີ່ຫ້ອງການ

ພາລະຜູກພັນຕາມສັນຍາເຊົ່າເພື່ອການດຳເນີນງານແຕ່ຍັງບໍ່ໄດ້ຮັບຮູ້ເປັນໜີ້ສິນມີດັ່ງນີ້:

	ທີ່ບທວນຄືນ 30 ມິຖຸນາ 2026 ກີບ	ກວດສອບ 31 ທັນວາ 2025 ກີບ
ພາຍໃນ 1 ປີ	554,876,561	489,785,261
ເກີນ 1 ປີ ແຕ່ບໍ່ເກີນ 5 ປີ	1,492,948,687	2,496,288,179
ລວມ	**2,047,825,248**	**2,986,073,440**

19. ເຫດການເກີດຂຶ້ນພາຍຫຼັງວັນທີ່ອອກບົດລາຍງານທາງການເງິນ

ບໍ່ມີເຫດການທີ່ເປັນສາລະສຳຄັນເກີດຂຶ້ນພາຍຫຼັງວັນທີຂອງບົດລາຍງານຖານະການເງິນ ທີ່ມີຜົນກະທົບຕໍ່ຕົວເລກໃນບົດລາຍງານການເງິນກາງປີຂອງບໍລິສັດ.